Media Release

Cambodia • Lao PDR • Thailand • Viet Nam
For sustainable development

MEKONG RIVER COMMISSION MRC FOR SUSTAINABLE DEVELOPMENT

ເພື່ອເຜີຍແຜ່

# ກອງເລຂາ ຄມສ ແລະ ສູນນ້ຳ LMC ລົງນາມບົດບັນທຶກຄວາມເຂົ້າໃຈສະບັບທຳອິດເພື່ອການຈັດການແມ່ນ້ຳຂອງ ຕອນເທິງ ແລະ ຕອນລຸ່ມ

**ນະຄອນຫລວງປັກກິ່ງ, ປະເທດຈີນ, 18 ທັນວາ 2019 —** ການແລກປ່ຽນຂໍ້ມູນ ແລະ ຂ່າວສານ, ການຕິດຕາມອ່າງນ້ຳຂອງ ແລະ ການຮ່ວມກັນປະເມີນນ້ຳ ແລະ ຊັບພະຍາກອນທີ່ກ່ຽວຂອ້ງແມ່ນຜົນປະໂຫຍດຫລັກທີ່ຈະໄດ້ຮັບຈາກການເປັນຄູ່ຮ່ວມມືໃຫມ່ລະຫວ່າງ ກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນ ແລະ ສູນຮ່ວມມືຊັບພະຍາກອນນ້ຳ ລານຊ່າງ-ແມ່ຂອງ ປະເທດຈີນ (ສູນນ້ຳ LMC).

ການຮ່ວມມືທາງດ້ານວິຊາການ ລະຫວ່າງ ກອງເລຂາ ຄມສ ແລະ ສູນນ້ຳ LMC ກາຍເປັນຮູບປະທຳມື້ວານນີ້ເຊິ່ງທັງສອງຝ່າຍໄດ້ບັນລຸຂໍ້ຕົກລົງເພື່ອລິເລີ່ມຮ່ວມມືກັນຢ່າງເປັນທາງການ.

ບົດບັນທຶກຄວາມເຂົ້າໃຈໄດ້ຖືກລົງນາມໂດຍ ທ່ານ ດຣ ອັນ ພິດສ ຮັດດະ, ຫົວຫນ້າກອງເລຂາ ຄມສ ແລະ ທ່ານ ດຣ ຊົງ ຢົງ, ເລຂາທິການໃຫຍ່ສູນນ້ຳ LMC, ໃນກອງປະຊຸມລະດັບລັດຖະມົນຕີການຮ່ວມມືຊັບພະຍາກອນນ້ຳ ລານຊ່າງ-ແມ່ຂອງ ຢູ່ນະຄອນຫລວງປັກກິ່ງ ເຊິ່ງເປັນສັກຂີພະຍານໂດຍລັດຖະມົນຕີຈາກກະຊວງນ້ຳ ແລະ ສິ່ງແວດລ້ອມຈາກຫົກປະເທດແມ່ນ້ຳຂອງ.

ດຣ ຮັດດະ ໄດ້ກ່າວວ່າ "ບົດບັນທຶກຄວາມເຂົ້າໃຈສະແດງເຖິງຄວາມພະຍາຍາມຮ່ວມກັນເພື່ອຍົກສູງການຮ່ວມມືລະຫວ່າງປະເທດຈີນ ແລະ ປະເທດລຸ່ມແມ່ນ້ຳຂອງ ເຊິ່ງພວກເຮົາຕອ້ງການຮັບປະກັນການຈັດການອ່າງແມ່ນ້ຳຂອງຕອນເທິງ ແລະ ລຸ່ມຢ່າງມີປະສິດທິຜົນ ເພື່ອຄວາມຍືນຍົງໃນອະນາຄົດ ແລະ ຜົນປະໂຫຍດຮ່ວມກັນ".

ອີກຫ້າປີຂ້າງຫນ້າ ທັງສອງຝ່າຍຈະເຮັດວຽກຮ່ວມກັນໂດຍຜ່ານການພັດທະນາ ແລະ ການຈັດການນ້ຳ ແລະ ຊັບພະຍາກອນທີ່ກ່ຽວຂ້ອງ ກໍຄືການຮ່ວມກັນສົ່ງເສີມການພັດທະນາເສດຖະກິດ ແລະ ສັງຄົມຂອງບັນດາປະເທດແມ່ນ້ຳຂອງຢ່າງຍືນຍົງ.

ຂະແຫນງການຮ່ວມມືທາງດ້ານວິຊາການລວມມີ ການແບ່ງປັນປະສົບການ, ແລກປ່ຽນຂໍ້ມູນຂ່າວສານ, ການຕິດຕາມອ່າງ, ການປະເມີນ ແລະ ຄົ້ນຄວ້າຮວ່ມກັນ, ການຈັດການຄວາມຮູ້ ແລະ ສ້າງທັກສະທີ່ກ່ຽວຂ້ອງ ແລະ ການເຝິກອົບຮົມ.

ດຣ ຊົງ ໄດ້ກ່າວວ່າ "ຂ້າພະເຈົ້າເຊື່ອຫມັ້ນວ່າບົດບັນທຶກຄວາມເຂົ້າໃຈຈະເຮັດໃຫ້ສູນນ້ຳຂອງພວກເຮົາ ແລະ ກອງເລຂາ ຄມສໃກ້ຊິດກັນຫລາຍຂຶ້ນ ແລະ ສ້າງການເຮັດວຽກຮ່ວມກັນໃນການຮ່ວມມືຊັບພະຍາກອນນ້ຳໃນພາກພື້ນ". ທ່ານກ່າວຕໍ່ວ່າ "ການຮ່ວມມືດັ່ງກ່າວຈະຊ່ວຍໃຫ້ພວກເຮົາສົ່ງເສີມຊີວິດການເປັນຢູ່ ແລະ ການພັດທະນາເສດຖະກິດ-ສັງຄົມໃນອ່າງລານຊ່າງ-ແມ່ຂອງ"

ເພື່ອເປັນການເລີ່ມຕົ້ນ ທັງສອງຝ່າຍຕົກລົງເຫັນດີທີ່ຈະເຮັດການຄົ້ນຄວ້າຮວ່ມກັນກ່ຽວກັບໄພແຫ້ງແລ້ງປີ 2019 ແລະ ການໄຫລຂອງນ້ຳໃນລະດັບຕ່ຳຢູ່ອ່າງແມ່ນ້ຳຂອງ ເຊິ່ງລວມເອົາທັງອ່າງຕອນລຸ່ມ ແລະ ຕອນເທິງຂອງແມ່ນ້ຳຂອງມີຊື່ວ່າ 'ລານຊ່າງ'.

ການຄົ້ນຄວ້າດັ່ງກ່າວຈະເລີ່ມໃນເດືອນມັງກອນ ແລະ ສິ້ນສຸດໃນເດືອນກັນຍາ 2020 ແລະ ຈຸດປະສົງແມ່ນຊອກຫາສາເຫດທີ່ກໍ່ໃຫ້ເກີດ ແລະ ຜົນກະທົບຂອງໄພແຫ້ງແລ້ງ ແລະ ສະພາບການໄຫລຂອງນໍ້າຕໍ່າ ໃນປີ 2019.

ນອກເຫນືອຈາກຜົນໄດ້ຮັບຈາກການຄົ້ນຄວ້າ, ການຄົ້ນຄວ້າດັ່ງກ່າວຍັງຈະໃຫ້ຄໍາແນະນໍາ ແລະ ການປະຕິບັດຕົວຈິງກ່ຽວກັບການແບ່ງປັນຂໍ້ມູນຂ່າວສານຂອງປະເທດສະມາຊິກ, ພັດທະນາຮູບແບບການສື່ສານທີ່ຊັດເຈນ, ແລະ ຊຸກຍູ້ວຽກງານການປະສານງານອ່າງເກັບນໍ້າໃນປະເທດຈີນ ແລະ ບັນດາປະເທດແມ່ນໍ້າຂອງ ເພື່ອການຕອບສະຫນອງຢ່າງມີປະສິດທິຜົນຕໍ່ກັບບັນຫາໄພແລ້ງ ແລະ ການໄຫລຂອງນໍ້າ ໃນປັດຈຸບັນ ແລະ ອະນາຄົດ.

ໂດຍອີງຕາມການລາຍງານຫລ້າສຸດຂອງ ຄສມ, ໄພແຫ້ງແລ້ງໃນປີ 2019 ໄດ້ເຮັດໃຫ້ລະດັບແມ່ນໍ້າຂອງຢູ່ຈຸດຕໍ່າສຸດໃນຮອບ 60 ປີ. ຫລາຍຂົງເຂດຂອງອ່າງນໍ້າຂອງໄດ້ປະສົບກັບບັນຫາລະດັບການໄຫລຂອງນໍ້າຕໍ່າຕັ້ງແຕ່ເດືອນມິຖຸນາ ເປັນຕົ້ນມາ.

ການໄຫລຂອງນໍ້າໃນລະດັບຕໍ່າ, ການຫລຸດລົງຂອງຕະກອນນໍ້າ, ແລະ ການປາກົດມີໄຄໃນດິນຊາຍ ແລະ ຊັ້ນພື້ນຫີນ ອາດເປັນຫນຶ່ງໃນສາເຫດທີ່ເຮັດໃຫ້ແມ່ນໍ້າຂອງໃນບາງຂົງເຂດປ່ຽນຈາກສີນໍ້າຕານຕາມປົກກະຕິ ເປັນ ສີຂຽວມໍລະກົດ.

**ໝາຍເຫດ:**

ຄມສ ແມ່ນ ອົງການຈັດຕັ້ງລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມືໃນອ່າງແມ່ນໍ້າຂອງຕອນລຸ່ມ, ສ້າງຕັ້ງຂຶ້ນໃນປີ 1995 ອີງຕາມສັນຍາແມ່ນໍ້າຂອງລະຫວ່າງຣາຊະອານາຈັກກໍາປູເຈຍ, ສປປ ລາວ , ຣາຊະອານາຈັກໄທ ແລະ ສສ ຫວຽດນາມ. ອົງການດັ່ງກ່າວເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມືກ່ຽວກັບນໍ້າ ແລະ ທັງເປັນສູນກາງຄວາມຮູ້ການຄຸ້ມຄອງຊັບພະຍາກອນນໍ້າເພື່ອການພັດທະນາທີ່ຍືນຍົງຂອງພາກພື້ນ.

**- ຈົບ -**

ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ :
ທ່ານ ໂສພຽກ ແມ
ເຈົ້າຫນ້າທີ່ການຂ່າວສື່ສານ
ກອງເລຂາຄະນະກໍາມາທິການແມ່ນໍ້າຂອງສາກົນ
ອີເມວ: sopheak@mrcmekong.org
ໂທລະສັບ: +856-21-263263, ຕໍ່. 4012
ໂທລະສັບມືຖື : +856-20-77779168

###